ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະນຳ ທຫລ ເຂົ້າອວຍພອນການນຳ ວປກ



ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 70 ປີ (20 ມັງກອນ 1949 - 20 ມັງກອນ 2019) ຄະນະພັກ-ຄະນະນຳ ທະນາຄານແຫ່ງ ສປປ ລາວ (ທຫລ) ຊຶ່ງນຳໂດຍສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ ພ້ອມຄະນະໄດ້ເຂົ້າອວຍພອນຄະນະພັກ-ຄະນະນຳວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ (ວປກ) ໂດຍໄດ້ມີການຕ້ອນຮັບຢ່າງອົບອຸ່ນຈາກສະຫາຍພົນຈັດຕະວາ ຄຳຫຼ້າ ພັນໄຊຍະສຸກ ກຳມະການຄະນະພັກກະຊວງປ້ອງກັນປະເທດ, ເລຂາຄະນະພັກ-ຫົວໜ້າການເມືອງ ວປກ ພ້ອມຄະນະ ຊຶ່ງໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂອງ ວປກ ໃນຕອນແລງຂອງວັນທີ 4 ມັງກອນ 2019.

ໃນໂອກາດດັ່ງກ່າວ; ສະຫາຍເລຂາຄະນະພັກ-ຜູ້ວ່າການທຫລ ໄດ້ກ່າວສະແດງຄວາມຮູ້ບຸນຄຸນຕໍ່ກັບການເຄື່ອນໄຫວຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນ ບົນຍ່ານທາງ 70 ປີແຫ່ງການກຳເນີດ, ສູ້ຮົບມີໄຊ ແລະ ເຕີບໃຫຍ່ຂະຫຍາຍຕົວ ພາຍໃຕ້ການນຳພາອັນປີຊາສາມາດສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ; ກອງທັບປະຊາຊົນລາວໄດ້ຜ່ານຜ່າອຸປະສັກນາໆປະການບໍ່ຈັກວ່າເທົ່າໃດ ແລະ ເຕັມໄປດ້ວຍການເສຍສະຫຼະອັນໃຫຍ່ຫຼວງໃນພາລະກິດປົດປ່ອຍຊາດເຮັດສຳເລັດພາລະກຳປະຫວັດສາດທີ່ພັກ ແລະ ປະຊາຊົນມອບໝາຍໃຫ້ຢ່າງມີໄຊສາມາດປົດປ່ອຍປະເທດຊາດໄດ້ຢ່າງສົມບູນ, ສະຖາປະນາສປປ ລາວ ໃນວັນທີ 2 ທັນວາ 1975 ຢ່າງສະຫງ່າຜ່າເຜີຍ; ມາເຖິງປັດຈຸບັນຍັງເປັນກຳລັງຫຼັກແຫຼ່ງໃນການປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ລະບອບໃໝ່ໄວ້ໄດ້ຢ່າງໝັ້ນຄົງ; ເວົ້າສະເພາະໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ທີ່ໄດ້ສືບຕໍ່ກໍ່ສ້າງ ແລະ ໃຫ້ການສຶກສາແກ່ພະນັກງານການນຳຂັ້ນສູງຂອງພັກ-ລັດ; ນາຍທະຫານຂັ້ນນຳພາ-ຂັ້ນບັນຊາໃນໄລຍະຜ່ານມາ.

ສະຫາຍເລຂາຄະນະພັກ-ຫົວໜ້າການເມືອງ ວປກ ກໍ່ໄດ້ຕີລາຄາສູງຕໍ່ການເຄື່ອນໄຫວຂອງ ທຫລ ໃນໄລຍະຜ່ານມາ ຊຶ່ງໄດ້ເປັນການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ໃນຂະນະດຽວກັນກໍ່ໄດ້ສະແດງຄວາມຂອບໃຈຕໍ່ການນຳທຫລ ທີ່ນຳເອົາຄວາມສາມັກຄີຮັກແພງຂອງບັນດາພະນັກງານຂະແໜງ ການທະນາຄານມາສູ່ນາຍ ແລະ ພົນທະຫານຂອງ ວປກ ໃນຄັ້ງນີ້ ແລະ ຫວັງວ່າໃນຕໍ່ໜ້ານີ້ 2 ອົງການພວກເຮົາຈະສືບຕໍ່ເສີມຂະຫຍາຍໃຫ້ງອກງາມຍິ່ງໆຂຶ້ນ.



ໃນໄລຍະດຽວກັນ; ສະຫາຍຜູ້ວ່າການ ທຫລ ກໍ່ໄດ້ໃຫ້ກຽດມອບເຄື່ອງກິລາຈຳນວນໜຶ່ງ ແລະ ເງິນສົດ 10.000.000 ກີບ ເພື່ອເປັນການປະກອບສ່ວນເຂົ້າໃນການສຶກສາ ແລະ ຄົ້ນຄ້ວາຂອງບັນດາອາຈານ ໃນ ວປກ ແລະ ກ່າວຮັບໂດຍສະຫາຍຫົວໜ້າການເມືອງ ວປກ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**